ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ຫ້ອງການ

ເລກທີ: 2112/ຫກ

ນະຄອນຫລວງວຽງຈັນ, ວັນທີ...3....ກັນຍາ 2024

# ໜັງສືແຈ້ງເຊີນ

ເຖິງ: ບັນດາບໍລິສັດ, ຫ້າງຮ້ານ ຜູ້ທີ່ມີຄວາມສາມາດ ແລະ ສົນໃຈໃຫ້ບໍລິການເຄື່ອງເຊົ່າ ປະເພດ ຈັກສຳເນົາເອກະສານ ແລະ ເຄື່ອງພິມເອກກະສານ.

ເລື່ອງ: ການປະມູນການບໍລິການເຄື່ອງເຊົ່າ ປະເພດຈັກສຳເນົາເອກະສານ ແລະ ເຄື່ອງພິມເອກກະສານ.

- ອີງຕາມການເຫັນດີຂອງ ຄະນະນຳກະຊວງການຕ່າງປະເທດ ຄັ້ງວັນທີ 08 ກໍລະກົດ 2024.

ຫ້ອງການ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເຂົ້າຮ່ວມການປະມູນໃນຮູບແບບສົມທຽບລາຄາ ສຳລັບເຄື່ອງເຊົ່າ ຈັກສຳເນົາເອກະສານ ສີ, ຈຳນວນ 2 ເຄື່ອງ, ຈັກສຳເນົາເອກະສານຂາວ-ດຳ ຈຳນວນ 45 ເຄື່ອງ ແລະ ເຄື່ອງພິມ ເອກະສານຂາວ-ດຳ ເລເຊີ, ຈຳນວນ 107 ເຄື່ອງ, ເພື່ອຮັບໃຊ້ເຂົ້າໃນວຽກງານ ຂອງບັນດາກົມພາຍໃນກະຊວງການ ຕ່າງປະເທດ ສົກປີ 2024-2025.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສື ຄ້ຳປະກັນການປະມູນ ຫລື ຫນັງສືຄ້ຳປະກັນການປະມູນ ຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສອງເປີເຊັນສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານ ມາພ້ອມ. ໃບຊອງປະມູນ 1,000,000 ກີບ.

ຊອງປະມູນຕ້ອງສົ່ງໃຫ້ຫ້ອງການ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 09:30 ໂມງ ຂອງ ວັນທີ 15 ຕຸລາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າ ເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດ ໃນເວລາ 10:00 ໂມງ ຂອງວັນທີ 15 ຕຸລາ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 3, ຕຶກ B, ກະຊວງການຕ່າງປະເທດ ໂດຍ ຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນເຂົ້າຮ່ວມນຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ບັນດາບໍລິສັດ, ຫ້າງຮ້ານ ທີ່ມີຈຸດປະສົ່ງໃຫ້ການບໍລິການ ຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ກະຊວງການຕ່າງປະເທດ ຫ້ອງການ

ທິບສະຫວັນ ສີສຸລາດ

ໝາຍເຫດ: ພົວພັນ ທ່ານ ຄົມຄາຍ ພະວໍລະໄຊ
ຫົວໜ້າພະແນກ ໄອຊີທີ ຫ້ອງການ, ກະຊວງການຕ່າງປະເທດ, ໂທ: 02055522362 ແລະ 020 94098080.
WhatsApp: 02055522362